ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງເຕັກໂນໂລຊີ ແລະ ການສື່ສານ

ເລກທີ 888 /ກຕສ
ນະຄອນຫຼວງວຽງຈັນ, ວັນທີ 9.11.2021

# ຂໍ້ຕົກລົງ
# ວ່າດ້ວຍການເຮັດທົດລອງທຸລະກຳຊັບສິນດິຈິຕອນ

- ອີງຕາມ ກົດໝາຍວ່າດ້ວຍທຸລະກຳທາງເອເລັກໂຕຣນິກ ສະບັບເລກທີ 20/ສພຊ, ລົງວັນທີ 07 ທັນວາ 2012;
- ອີງຕາມການມອບສິດຂອງທ່ານນາຍົກລັດຖະມົນຕີ ໃນແຈ້ງການຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 62/ຫສນຍ, ລົງວັນທີ 15 ຕຸລາ 2021.
- ອີງຕາມການຕົກລົງເປັນເອກະພາບ ໃນກອງປະຊຸມປຶກສາຫາລື ລະຫວ່າງ ຄະນະນຳຂອງບັນດາກະຊວງເຕັກໂນໂລຊີ ແລະ ການສື່ສານ, ກະຊວງການເງິນ, ກະຊວງພະລັງງານ ແລະ ບໍ່ແຮ່, ທະນາຄານ ແຫ່ງ ສປປ ລາວ ແລະ ບໍລິສັດໄຟຟ້າລາວ ຄັ້ງວັນທີ່ 28/10/2021.

## ລັດຖະມົນຕີກະຊວງເຕັກໂນໂລຊີ ແລະ ການສື່ສານ ຕົກລົງ:

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດປະເພດ, ລະບຽບການ ແລະ ມາດຕະການ ກ່ຽວກັບການເຮັດທົດລອງທຸລະກຳຊັບສິນດິຈິຕອນ ໃນ ສປປ ລາວ ໃຫ້ມີຄວາມປອດໄພ, ໜ້າເຊື່ອຖື ແລະ ມີປະສິດທິພາບ ແນໃສ່ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງຜູ້ດຳເນີນທຸລະກຳ ແລະ ຜູ້ໃຊ້ບໍລິການ ເພື່ອປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ.

**ມາດຕາ 2 ທຸລະກຳຊັບສິນດິຈິຕອນ**

ທຸລະກຳຊັບສິນດິຈິຕອນ ແມ່ນ ການດຳເນີນກິດຈະການໃດໜຶ່ງ ຫຼື ທັງໝົດກິດຈະການກ່ຽວກັບທຸລະກິດຊັບສິນດິຈິຕອນ ດ້ວຍການນຳໃຊ້ເຕັກໂນໂລຊີ ກຸ່ມຂໍ້ມູນຜູກພັນ (Blockchain) ນັບແຕ່ຂອດການຂຸດຄົ້ນໄປຈົນເຖິງຂອດບໍລິການຊື້-ຂາຍ ຫຼື ແລກປ່ຽນລະຫວ່າງເງິນຄຣິບໂຕດ້ວຍກັນ.

**ມາດຕາ 3 ອະທິບາຍຄຳສັບ**

ຄຳສັບທີ່ໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ຊັບສິນດິຈິຕອນ (Digital Asset) ໝາຍເຖິງ** ຊັບສິນທີ່ຖືກສ້າງຂຶ້ນດ້ວຍຂໍ້ມູນທາງເອເລັກໂຕຣນິກ ເພື່ອໃຫ້ເປັນຕົວກາງໃນການແລກປ່ຽນ ຫຼື ຊື້-ຂາຍ ດ້ວຍກັນ.

**ຊັບສິນດິຈິຕອນ** ແບ່ງອອກເປັນ 02 ປະເພດ ຄື:

**ກ. ເງິນຄຣິບໂຕ (Crypto currency)**: ແມ່ນຂໍ້ມູນດິຈິຕອນທີ່ຖືກສ້າງຂຶ້ນໃນລະບົບເຄືອຂ່າຍເອເລັກໂຕຣນິກໃນຫຼາຍຮູບແບບ ເຊັ່ນ: ບິດຄອຍ (Bitcoin), ອີເທີລຽມ (Ethereum), ໄລຄອຍ (Litecoin) ແລະ ອື່ນໆອີກ;

**ຂ. ຫຼຽນໂທເຄັນດິຈິຕອນ (Digital Token)**: ແມ່ນຂໍ້ມູນເອເລັກໂຕຣນິກສ້າງຂຶ້ນເປັນລະບົບຫຼຽນດິຈິຕອນເພື່ອໃຊ້ງານສະເພາະຕາມຈຸດປະສົງຢ່າງໃດຢ່າງໜຶ່ງຂອງຜູ້ສ້າງຫຼຽນ ຫຼື ກຳນົດສິດຂອງບຸກຄົນໃນການຮັບສິນຄ້າ, ການບໍລິການ ຫຼື ການຮ່ວມລົງທຶນເຊິ່ງແບ່ງເປັນ 02 ປະເພດຫຼັກ ຄື: ໂທເຄັນດິຈິຕອນເພື່ອການລົງທຶນ (Investment Token) ແລະ ໂທເຄັນດິຈິຕອນເພື່ອການໃຊ້ປະໂຫຍດ (Utility Token).

2. **ສູນຊື້-ຂາຍເງິນຄຣິບໂຕ ໝາຍເຖິງ** ລະບົບຖານ (Platform) ທີ່ໄດ້ຮັບອະນຸຍາດຈາກທະນາຄານແຫ່ງ ສປປ ລາວ ເພື່ອໃຫ້ບໍລິການຊື້-ຂາຍ ຫຼື ແລກປ່ຽນ ຊັບສິນດິຈິຕອນ ຫຼື ອຳນວຍຄວາມສະດວກໃຫ້ຜູ້ໃຊ້ບໍລິການທີ່ມີຄວາມຕ້ອງການຊື້-ຂາຍ ຫຼື ແລກປ່ຽນຊັບສິນດິຈິຕອນສາມາດຕົກລົງ ຫຼື ຈັບຄູ່ເຮັດທຸລະກຳນຳກັນໄດ້;
3. **ເຕັກໂນໂລຊີກຸ່ມຂໍ້ມູນພູກພັນ (Blockchain) ໝາຍເຖິງ** ລະບົບການເກັບຮັກສາຂໍ້ມູນແບບບໍ່ລວມສູນແຕ່ຂໍ້ມູນທີ່ໄດ້ຮັບການປົກປ້ອງນັ້ນ ຈະຖືກເກັບຮັກສາເປັນສຳເນົາໄວ້ໃນລະບົບເຄືອຂ່າຍເອເລັກໂຕຣນິກຂອງຜູ້ໃຊ້ງານທັງໝົດ ທີ່ໃຊ້ຖານຂໍ້ມູນເປັນແຕ່ລະກຸ່ມພົວພັນຫາກັນແບບຕ່ອງໂສ້ ຊຶ່ງມີຄວາມປອດໄພສູງ ແລະ ຍາກຕໍ່ການປອມແປງ ຫຼື ໂຈລະກຳຂໍ້ມູນ.

**ມາດຕາ 4 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບບຸກຄົນ ແລະ ນິຕິບຸກຄົນ ທີ່ໄດ້ຮັບອະນຸຍາດດຳເນີນທຸລະກຳຊັບສິນດິຈິຕອນຢູ່ ສປປ ລາວ.

**ມາດຕາ 5 ປະເພດທຸລະກິດຊັບສິນດິຈິຕອນ**

ທຸລະກິດຊັບສິນດິຈິຕອນທີ່ອະນຸຍາດໃຫ້ດຳເນີນທຸລະກຳທົດລອງຢູ່ ສປປ ລາວ ມີ 02 ປະເພດ ດັ່ງນີ້:

1. ການຂຸດຄົ້ນເງິນຄຣິບໂຕ;
2. ການຊື້-ຂາຍເງິນຄຣິບໂຕ.

ການຂຸດຄົ້ນເງິນຄຣິບໂຕ ແມ່ນການດຳເນີນກິດຈະການທີ່ນຳໃຊ້ຊັບພະຍາກອນຄອມພິວເຕີ ຫຼື ອຸປະກອນເອເລັກໂຕຣນິກ ເພື່ອຢັ້ງຢືນທຸລະກຳໃຫ້ລະບົບ ຫຼື ຄຳນວນສົມຜົນຄະນິດສາດ ແລ້ວໄດ້ຜົນຕອບແທນເປັນຫົວໜ່ວຍເງິນຄຣິບໂຕ.

ການຊື້-ຂາຍເງິນຄຣິບໂຕ ແມ່ນການດຳເນີນກິດຈະການບໍລິການຊື້-ຂາຍ, ແລກປ່ຽນເງິນຄຣິບໂຕ ຢູ່ໃນສູນຊື້-ຂາຍເງິນຄຣິບໂຕ ທີ່ໄດ້ຮັບອະນຸຍາດຈາກທະນາຄານແຫ່ງ ສປປ ລາວ.

**ມາດຕາ 6 ມາດຕະຖານ ແລະ ເງື່ອນໄຂຂອງຜູ້ດຳເນີນທຸລະກຳຂຸດຄົ້ນເງິນຄຣິບໂຕ**

ຜູ້ດຳເນີນທຸລະກຳຂຸດຄົ້ນເງິນຄຣິບໂຕ ຕ້ອງມີມາດຕະຖານ ແລະ ເງື່ອນໄຂ ດັ່ງນີ້:

1. ເປັນບໍລິສັດຂອງຄົນລາວທີ່ມີຄວາມໝັ້ນຄົງທາງດ້ານການເງິນ, ມີທຶນພຽງພໍສຳລັບການດຳເນີນທຸລະກິດຂຸດຄົ້ນເງິນຄຣິບໂຕ, ມີເງິນຄ້ຳປະກັນທີ່ເໝາະສົມກັບທຸລະກິດການຂຸດຄົ້ນ ເພື່ອຮັບປະກັນການຈັດການຂີ້ເຫຍື້ອເອເລັກໂຕຣນິກ;
2. ຜູ້ດຳເນີນທຸລະກຳ ຫຼື ຜູ້ຖືຮຸ້ນ ຕ້ອງມີປະຫວັດຈະແຈ້ງ, ບໍ່ຢູ່ໃນລະຫວ່າງຖືກກ່າວຫາ ຫຼື ຖືກດຳເນີນຄະດີຕາມກົດໝາຍ ກ່ຽວກັບການສໍ້ໂກງ, ການຟອກເງິນ ຫຼື ກ່ຽວຂ້ອງກັບການເງິນ, ຫຼື ເຄີຍໄດ້ຮັບໂທດ

ກ່ຽວກັບຄະດີສໍ້ໂກງ ຫຼື ມີໜີ້ຕ້ອງຮັບທວງຍາກ (NPL) ລວມທັງ ໜີ້ຕ້ອງຮັບທວງຍາກຂອງບຸກຄົນ ແລະ ນິຕິບຸກຄົນທີ່ກ່ຽວພັນຢູ່ທະນາຄານໃນໄລຍະທີ່ກຳລັງດຳເນີນການຂໍອະນຸຍາດ ຈາກລັດຖະບານ;

3. ມີມາດຕະການຮັກສາຄວາມປອດໄພຈາກການໂຈລະກຳຂໍ້ມູນເອເລັກໂຕຣນິກ ລວມທັງການບໍລິຫານຄວາມສ່ຽງທີ່ເກີດຂຶ້ນຈາກການໂຈລະກຳ, ມີມາດຕະການຕ້ານການຟອກເງິນ ແລະ ການກໍ່ການຮ້າຍ;
4. ມີພື້ນຖານໂຄງລ່າງຄົບຖ້ວນ, ຮັບປະກັນການປົກປັກຮັກສາສິ່ງແວດລ້ອມ, ມີສະຖານທີ່ຕັ້ງໂຮງງານຂຸດຄົ້ນຢູ່ໃກ້ກັບສະຖານີໄຟຟ້າແຮງສູງ ທີ່ສາມາດສະໜອງໄຟຟ້າໃຫ້, ປະຕິບັດຕາມມາດຕະຖານເຕັກນິກທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ ຂອງກະຊວງເຕັກໂນໂລຊີ ແລະ ການສື່ສານ ແລະ ກະຊວງພະລັງງານ ແລະ ບໍ່ແຮ່. ການລົງທຶນກໍ່ສ້າງລະບົບສາຍສົ່ງໄຟຟ້າ ແລະ ສະຖານີໄຟຟ້າຍ່ອຍ ທີ່ນຳໃຊ້ໃນການຂຸດຄົ້ນເງິນຄຣິບໂຕ ແມ່ນເປັນຄວາມຮັບຜິດຊອບຂອງຜູ້ດຳເນີນທຸລະກຳ;
5. ໂຮງງານຂຸດຄົ້ນເງິນຄຣິບໂຕ ແຕ່ລະແຫ່ງ ຕ້ອງນຳໃຊ້ພະລັງງານໄຟຟ້າ ບໍ່ຕ່ຳກວ່າ 10 ເມັກກາວັດ. ສະໜອງໄຟຟ້າດ້ວຍແຮງດັນ 115 kV ຫຼື 230 kV, ອາຍຸສັນຍາຕໍ່ໜຶ່ງສະບັບແມ່ນ 06 ປີ ແລະ ມີສິດຕໍ່ສັນຍາຂຶ້ນກັບຄວາມສາມາດການສະໜອງໄຟຟ້າຂອງ ລັດວິສາຫະກິດໄຟຟ້າລາວ. ລາຄາໄຟຟ້າແມ່ນ 6,95 ເຊັນໂດລາສະຫະລັດຕໍ່ກິໂລວັດໂມງ ແລະ 5,5 ເຊັນໂດລາສະຫະລັດຕໍ່ກິໂລວັດໂມງສຳລັບຜູ້ປະກອບການທີ່ມີຈຸດປະສົງຂຸດຄົ້ນແຕ່ໃນລະດູຝົນເທົ່ານັ້ນ;
6. ລັດຖະບານຈະຍົກເວັ້ນຄ່າຜ່ານສາຍສົ່ງ ແລະ ພາສີນຳເຂົ້າໄຟຟ້າຈາກຕ່າງປະເທດໃຫ້ລັດວິສາຫະກິດໄຟຟ້າລາວ ເພື່ອສະໜອງໃຫ້ການຂຸດຄົ້ນເງິນຄຣິບໂຕ.
7. ລາຍງານກ່ຽວກັບການດຳເນີນທຸລະກິດປະຈຳປີ, ລາຍງານເມື່ອມີການປ່ຽນແປງຜູ້ບໍລິຫານຕໍ່ກະຊວງເຕັກໂນໂລຊີ ແລະ ການສື່ສານ ແລະ ກະຊວງການເງິນ ຜ່ານທາງເອເລັກໂຕຣນິກ ຫຼື ເປັນລາຍລັກອັກສອນ ພາຍໃນ 15 ວັນລັດຖະການ. ໃນກໍລະນີທີ່ຢຸດຕິທຸລະກຳຂຸດຄົ້ນເງິນຄຣິບໂຕແລ້ວ ຫ້າມນຳອອກເຄື່ອງອຸປະກອນຂຸດຄົ້ນດັ່ງກ່າວ;
8. ຜູ້ໄດ້ຮັບອະນຸຍາດ ດຳເນີນທຸລະກຳຂຸດຄົ້ນເງິນຄຣິບໂຕ ທີ່ໄດ້ຮັບອະນຸມັດ ຈຳນວນພະລັງງານໄຟຟ້າແລ້ວ ຕ້ອງມີການເຊັນສັນຍາຊື້-ຂາຍໄຟຟ້າ ກັບລັດວິສາຫະກິດໄຟຟ້າລາວ ໂດຍບໍ່ຕ້ອງຈ່າຍເງິນຄ້ຳປະກັນ. ແຕ່ເລີ່ມຈາກມື້ຊົມໃຊ້ໄຟຟ້າ, ຜູ້ດຳເນີນທຸລະກິດຈະຕ້ອງຈ່າຍຄ່າໄຟຟ້າຕາມແຜນການນຳໃຊ້ໄຟຈຳນວນ 01 ເດືອນ ເພື່ອມັດຈຳລ່ວງໜ້າກ່ອນໃຫ້ລັດວິສາຫະກິດໄຟຟ້າລາວ. ກະຊວງພະລັງງານ ແລະ ບໍ່ແຮ່ ສົມທົບກັບຜູ້ດຳເນີນທຸລະກິດ ເປັນຜູ້ກຳນົດແຜນການນຳໃຊ້ໄຟຟ້າກ່ອນການເຊັນສັນຍາຊື້-ຂາຍໄຟຟ້າ;
9. ກະຊວງພະລັງງານ ແລະ ບໍ່ແຮ່ ຕ້ອງຢັ້ງຢືນວ່າມີໄຟຟ້າພຽງພໍ ໂດຍອີງເອົາການຊົມໃຊ້ໄຟຟ້າຂອງສັງຄົມເປັນບຸລິມະສິດຕົ້ນຕໍ;
10. ຕ້ອງປະຕິບັດພັນທະຕາມທີ່ໄດ້ກຳນົດໄວ້ໃນມາດຕາ 10 ຂອງຂໍ້ຕົກລົງສະບັບນີ້ ແລະ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງຂອງ ສປປ ລາວ.

**ມາດຕາ 7 ລະບຽບການອະນຸມັດການດຳເນີນທຸລະກຳຂຸດຄົ້ນເງິນຄຣິບໂຕ**

ຜູ້ດຳເນີນທຸລະກຳຂຸດຄົ້ນເງິນຄຣິບໂຕ ຕ້ອງປະຕິບັດຕາມລະບຽບການ ດັ່ງນີ້:

1. ເປັນບໍລິສັດທີ່ຂຶ້ນທະບຽນວິສາຫະກິດຖືກຕ້ອງຕາມລະບຽບກົດໝາຍ ໃນ ສປປ ລາວ;
2. ມີສັນຍາຊື້-ຂາຍໄຟຟ້າກັບລັດວິສາຫະກິດໄຟຟ້າລາວ ໂດຍໄດ້ຮັບການອະນຸຍາດຈາກກະຊວງພະລັງງານ ແລະ ບໍ່ແຮ່;

3. ໄດ້ຮັບໃບອະນຸຍາດດຳເນີນທຸລະກຳຂຸດຄົ້ນເງິນຄຣິບໂຕຈາກ ກະຊວງເຕັກໂນໂລຊີ ແລະ ການສື່ສານ;
4. ປະຕິບັດລະບົບບັນຊີ ແລະ ການລາຍງານຖານະການເງິນຕາມກົດໝາຍວ່າດ້ວຍການບັນຊີ ຂອງ ສປປ ລາວ ແລະ ມີການກວດສອບບັນຊີຈາກ ຜູ້ກວດສອບອິດສະຫຼະ ແລະ ກົດໝາຍວ່າດ້ວຍການກວດສອບ;
5. ທະນາຄານແຫ່ງ ສປປ ລາວ ສາມາດກວດກາເງິນໃນກະເປົາເງິນຄຣິບໂຕ (Crypto Wallet) ທີ່ໄດ້ຈາກການຂຸດຄົ້ນເງິນຄຣິບໂຕໂດຍຜ່ານການປະສານສົມທົບກັບກະຊວງເຕັກໂນໂລຊີ ແລະ ການສື່ສານ;
6. ເງິນຄຣິບໂຕທີ່ຂຸດຄົ້ນໄດ້ຕ້ອງນຳເຂົ້າໃນສູນຊື້-ຂາຍ ເງິນຄຣິບໂຕ ທີ່ໄດ້ຮັບການອະນຸຍາດ ຢູ່ໃນ ສປປ ລາວ ໂດຍຖືກຕ້ອງຕາມລະບຽບການຂອງທະນາຄານ ແຫ່ງ ສປປ ລາວ. ກໍລະນີມີການຂາຍເງິນຄຣິບໂຕທີ່ຂຸດຄົ້ນໄດ້ອອກໄປຕ່າງປະເທດຕ້ອງນຳລາຍຮັບຈາກການຂາຍນັ້ນເຂົ້າມາ ສປປ ລາວ ທັງໝົດ;
7. ເດັດຂາດ ບໍ່ອອກອະນຸຍາດໃຫ້ຜູ້ທີ່ຢູ່ໃນລະຫວ່າງຖືກດຳເນີນຄະດີຕາມກົດໝາຍ ກ່ຽວກັບການສໍ້ໂກງ, ການຟອກເງິນ ຫຼື ກ່ຽວຂ້ອງກັບການເງິນ, ຫຼື ເຄີຍໄດ້ຮັບໂທດກ່ຽວກັບຄະດີສໍ້ໂກງ ຫຼື ມີໜີ້ຕ້ອງຮັບທວງຍາກ (NPL) ລວມທັງ ໜີ້ຕ້ອງຮັບທວງຍາກຂອງບຸກຄົນ ແລະ ນິຕິບຸກຄົນທີ່ກ່ຽວພັນຢູ່ທະນາຄານໃນໄລຍະທີ່ກຳລັງດຳເນີນການຂໍອະນຸຍາດ ຫຼື ຖ້າຫາກໄດ້ຮັບອະນຸຍາດແລ້ວກໍ່ຕ້ອງຖືກຍົກເລີກການອະນຸມັດໂດຍທັນທີເພື່ອຮັບປະກັນຄວາມໂປ່ງໃສ ແລະ ຄວາມຊື່ສັດບໍລິສຸດໃຈ ຕໍ່ພັກ ແລະ ລັດ.

**ມາດຕາ 8 ມາດຕະຖານ ແລະ ເງື່ອນໄຂຂອງຜູ້ດຳເນີນທຸລະກຳຊື້-ຂາຍ ເງິນຄຣິບໂຕ**

ຜູ້ໃຫ້ບໍລິການຊື້-ຂາຍເງິນຄຣິບໂຕ ຕ້ອງມີມາດຕະຖານ ແລະ ເງື່ອນໄຂ ດັ່ງນີ້:

1. ເປັນບໍລິສັດຂອງຄົນລາວທີ່ມີຄວາມໝັ້ນຄົງທາງດ້ານການເງິນ, ມີທຶນພຽງພໍສຳລັບການດຳເນີນທຸລະກິດໃຫ້ບໍລິການຊື້-ຂາຍເງິນຄຣິບໂຕ. ພ້ອມກັນນັ້ນກໍ່ຕ້ອງມີເງິນຄ້ຳປະກັນຈຳນວນ 5.000.000 ໂດລາສະຫະລັດ ຝາກໄວ້ຢູ່ທະນາຄານແຫ່ງ ສປປ ລາວ;
2. ມີການຮ່ວມມືກັບທະນາຄານທຸລະກິດທີ່ມີຄວາມໝັ້ນຄົງໃນ ສປປ ລາວ ເພື່ອໃຫ້ປະຕິບັດໜ້າທີ່ໃນການຊຳລະເງິນ ຕາມລະບຽບການທີ່ທະນາຄານແຫ່ງ ສປປ ລາວ ວາງອອກ;
3. ຜູ້ໃຫ້ບໍລິການຊື້-ຂາຍ ຫຼື ຜູ້ຖືຮຸ້ນ ຕ້ອງມີປະຫວັດຈະແຈ້ງ ແລະ ບໍ່ຢູ່ໃນລະຫວ່າງຖືກກ່າວຫາ ຫຼື ຖືກດຳເນີນຄະດີຕາມກົດໝາຍ ກ່ຽວກັບການສໍ້ໂກງ, ການຟອກເງິນ ຫຼື ກ່ຽວຂ້ອງກັບການເງິນ, ຫຼື ເຄີຍໄດ້ຮັບໂທດກ່ຽວກັບຄະດີສໍ້ໂກງ ຫຼື ມີໜີ້ຕ້ອງຮັບທວງຍາກ (NPL) ລວມທັງ ໜີ້ຕ້ອງຮັບທວງຍາກຂອງບຸກຄົນ ແລະນິຕິບຸກຄົນທີ່ກ່ຽວພັນຢູ່ທະນາຄານ ເພື່ອຮັບປະກັນ ແລະ ສ້າງຄວາມໝັ້ນໃຈ ຕໍ່ຜູ້ມາໃຊ້ບໍລິການ;
4. ຮັບປະກັນດ້ານຄວາມປອດໄພຂອງຊັບສິນລູກຄ້າ ແລະ ມີມາດຕະການທົດແທນຄວາມເສຍຫາຍແກ່ລູກຄ້າ ຕາມກົດໝາຍ ແລະ ລະບຽບການຂອງທະນາຄານແຫ່ງ ສປປ ລາວ;
5. ມີມາດຕະການຮັກສາຄວາມປອດໄພຈາກການໂຈລະກຳຂໍ້ມູນເອເລັກໂຕຣນິກລວມທັງການບໍລິຫານຄວາມສ່ຽງທີ່ເກີດຈາກການໂຈລະກຳ, ມີມາດຕະການດ້ານການຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ, ສາມາດກວດສອບຄວາມຖືກຕ້ອງ, ພິສູດ ແລະ ຢັ້ງຢືນຕົວຕົນຂອງລູກຄ້າໂດຍສະເພາະລູກຄ້າທີ່ເປັນຄົນຕ່າງປະເທດ (Digital ID, e-KYC) ແລະ ຮູ້ຈັກຂໍ້ມູນຕົວຈິງຂອງລູກຄ້າຕາມລະບຽບການທີ່ທະນາຄານ ແຫ່ງ ສປປ ລາວ ກຳນົດ;
6. ມີລະບົບບັນຊີ ແລະ ການລາຍງານຖານະການເງິນຕາມກົດໝາຍວ່າດ້ວຍການບັນຊີ ຂອງ ສປປ ລາວ ແລະ ມີການກວດສອບບັນຊີຈາກ ຜູ້ກວດສອບອິດສະຫຼະ ແລະ ກົດໝາຍວ່າດ້ວຍການກວດສອບ;
7. ການຊື້-ຂາຍໃນສູນຊື້-ຂາຍເງິນຄຣິບໂຕຕ້ອງດຳເນີນເປັນສະກຸນເງິນກີບ;

8. ລາຍງານກ່ຽວກັບການດຳເນີນທຸລະກິດຕາມລະບົບລາຍງານ, ລາຍງານເມື່ອມີການປ່ຽນແປງຜູ້ບໍລິຫານຕໍ່ທະນາຄານແຫ່ງ ສປປ ລາວ ແລະ ກະຊວງການເງິນ ຜ່ານທາງເອເລັກໂຕຣນິກ ຫຼື ເປັນລາຍລັກອັກສອນພາຍໃນ 15 ວັນລັດຖະການ;
9. ຕ້ອງປະຕິບັດພັນທະຕາມທີ່ໄດ້ກຳນົດໄວ້ໃນມາດຕາ 10 ຂອງຂໍ້ຕົກລົງສະບັບນີ້ ແລະ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ຂອງ ສປປ ລາວ.

**ມາດຕາ 9 ລະບຽບການອະນຸມັດດຳເນີນທຸລະກຳຊື້-ຂາຍເງິນຄຣິບໂຕ**

ຜູ້ໃຫ້ບໍລິການຊື້-ຂາຍເງິນຄຣິບໂຕ ຕ້ອງປະຕິບັດຕາມລະບຽບການ ດັ່ງນີ້:

1. ເປັນບໍລິສັດຂອງຄົນລາວທີ່ຂຶ້ນທະບຽນວິສາຫະກິດຖືກຕ້ອງຕາມລະບຽບກົດໝາຍໃນ ສປປ ລາວ;
2. ໄດ້ຮັບໃບອະນຸຍາດດຳເນີນທຸລະກິດຊື້-ຂາຍເງິນຄຣິບໂຕຈາກທະນາຄານແຫ່ງ ສປປ ລາວ;
3. ໄດ້ຮັບໃບຢັ້ງຢືນມາດຕະຖານດ້ານເຕັກນິກຂອງລະບົບຊື້-ຂາຍເງິນຄຣິບໂຕຈາກກະຊວງເຕັກໂນໂລຊີ ແລະ ການສື່ສານ;
4. ປະຕິບັດລະບົບບັນຊີ ແລະ ການລາຍງານຖານະການເງິນຕາມກົດໝາຍວ່າດ້ວຍການບັນຊີ ຂອງ ສປປ ລາວ ແລະ ມີການກວດສອບບັນຊີຈາກ ຜູ້ກວດສອບອິດສະຫຼະ ແລະ ກົດໝາຍວ່າດ້ວຍການກວດສອບ;
5. ເດັດຂາດ ບໍ່ອອກອະນຸຍາດໃຫ້ບຸກຄົນ ແລະ ນິຕິບຸກຄົນ (ກຸ່ມບໍລິສັດ ແລະ ບໍລິສັດໃນເຄືອຂ່າຍ) ຜູ້ທີ່ຢູ່ໃນລະຫວ່າງຖືກດຳເນີນຄະດີຕາມກົດໝາຍ ກ່ຽວກັບການສໍ້ໂກງ, ການຟອກເງິນ ຫຼື ກ່ຽວຂ້ອງກັບການເງິນ, ຫຼື ເຄີຍໄດ້ຮັບໂທດກ່ຽວກັບຄະດີສໍ້ໂກງ ຫຼື ມີໜີ້ຕ້ອງຮັບທວງຍາກ (NPL) ລວມທັງ ໜີ້ຕ້ອງຮັບທວງຍາກຂອງບຸກຄົນ ແລະ ນິຕິບຸກຄົນທີ່ກ່ຽວພັນ ຢູ່ທະນາຄານ ໃນໄລຍະທີ່ກຳລັງດຳເນີນການຂໍອະນຸຍາດ ຫຼືຖ້າຫາກໄດ້ຮັບອະນຸຍາດແລ້ວ ກໍ່ຕ້ອງຖືກຍົກເລີກການອະນຸມັດໂດຍທັນທີເພື່ອຮັບປະກັນຄວາມໂປ່ງໃສ ແລະສ້າງຄວາມໝັ້ນໃຈ ຕໍ່ຜູ້ມາໃຊ້ບໍລິການ.
6. ຈຳນວນສູນຊື້-ຂາຍເງິນຄຣິບໂຕ ບໍ່ເກີນ 02 ແຫ່ງໃນໄລຍະການທົດລອງນີ້.

**ມາດຕາ 10 ພັນທະທາງດ້ານການເງິນ**

ທຸລະກິດຊັບສິນດິຈິຕອນ ຕ້ອງປະກອບສ່ວນພັນທະໃຫ້ຄົບຖ້ວນ ດັ່ງນີ້:

**ກ. ສຳລັບກິດຈະການ ການຂຸດຄົ້ນເງິນຄຣິບໂຕ:**

1. ຄ່າລິຂະສິດໃນການອະນຸຍາດດຳເນີນທຸລະກຳຂຸດຄົ້ນເງິນຄຣິບໂຕ ເກັບຄັ້ງດຽວຈຳນວນ 500.000 ໂດລາສະຫະລັດ ຕໍ່ ໃບອະນຸຍາດ;
2. ວິສາຫະກິດຂຸດຄົ້ນເງິນຄຣິບໂຕຕ້ອງຈ່າຍອາກອນແບບມອບເໝົາໂດຍອີງຕາມຂະໜາດຂອງການສະໜອງພະລັງງານໄຟຟ້າຄື: ທຸກໆ 10 ເມກາວັດໃດ ຕ້ອງມອບ 1.000.000 ໂດລາສະຫະລັດ, ໝາຍຄວາມວ່າແຕ່ລະ 01 ເມກາວັດໃດໃນສັນຍາ ຕ້ອງຈ່າຍ 100.000 ໂດລາສະຫະລັດ, ໂດຍມອບເຂົ້າງົບປະມານແຫ່ງລັດເປັນງວດ (4 ງວດຕໍ່ປີ). ການມອບແຕ່ລະງວດບໍ່ໃຫ້ກາຍວັນທີ 20 ຂອງເດືອນທີໜຶ່ງຂອງງວດຖັດໄປ. ເລີ່ມແຕ່ປີທີ 03 ເປັນຕົ້ນໄປຕ້ອງໄດ້ມີການທົບທວນການຈ່າຍອາກອນແບບມອບເໝົາຄືນໃໝ່;
3. ໄດ້ຮັບການຍົກເວັ້ນພາສີ, ສ່ວຍສາອາກອນ ຈາກການນຳເຂົ້າອຸປະກອນເອເລັກໂຕຣນິກ ທີ່ນຳໃຊ້ເຂົ້າໃນການຂຸດຄົ້ນເງິນຄຣິບໂຕ.

**ຂ. ສຳລັບກິດຈະການ ການຊື້-ຂາຍເງິນຄຣິບໂຕ:**

1. ຄ່າລິຂະສິດໃບອະນຸຍາດດຳເນີນທຸລະກິດ ສູນຊື້-ຂາຍເງິນຄຣິບໂຕເກັບຄັ້ງດຽວ 1.000.000 ໂດລາ ສະຫະລັດຕໍ່ໃບອະນຸຍາດ;
2. ວິສາຫະກິດ(ສູນ)ບໍລິການຊື້-ຂາຍເງິນຄຣິບໂຕ ຕ້ອງຈ່າຍອາກອນແບບມອບເໝົາໃນອັດຕາ 15% ຂອງຄ່າທຳນຽມທີ່ສູນບໍລິການເກັບຈາກຜູ້ຊື້-ຂາຍໃນເວລາຊື້-ຂາຍ ແຕ່ລະຄັ້ງໂດຍມອບ ເຂົ້າງົບປະມານແຫ່ງລັດເປັນງວດ (4 ງວດຕໍ່ປີ). ການມອບແຕ່ລະງວດບໍ່ໃຫ້ກາຍວັນທີ 20 ຂອງເດືອນທີໜຶ່ງຂອງງວດຖັດໄປ.

ພັນທະຕ່າງໆຂ້າງເທິງນີ້ ແມ່ນກຳນົດເປັນຫຼັກການເພື່ອໃຫ້ຜູ້ດຳເນີນທຸລະກິດຈັດຕັ້ງປະຕິບັດ, ນອກຈາກທີ່ກຳນົດໄວ້ຂ້າງເທິງນີ້ ຜູ້ດຳເນີນທຸລະກິດ ແລະ ຜູ້ທີ່ມີລາຍໄດ້ ຕ້ອງປະຕິບັດຕາມກົດໝາຍ ແລະ ລະບຽບການກ່ຽວຂ້ອງ.

**ມາດຕາ 11 ຂໍ້ຫ້າມ**

ຜູ້ດຳເນີນທຸລະກຳຊັບສິນດີຈີຕອນ ຫ້າມມີພຶດຕິກຳ ດັ່ງນີ້:

1. ພົວພັນ ຫຼື ນຳໃຊ້ເພື່ອເຂົ້າຮ່ວມຂະບວນການຟອກເງິນ;
2. ປັ່ນປ່ວນຕະຫຼາດການເງິນ ແລະ ອັດຕາແລກປ່ຽນຢູ່ ສປປ ລາວ;
3. ສະໜັບສະໜູນໃນການກໍ່ການຮ້າຍ ຫຼື ແຕະຕ້ອງເຖິງຄວາມໝັ້ນຄົງຂອງຊາດ;
4. ໃຫ້ບໍລິການແລກປ່ຽນຊື້-ຂາຍຜ່ານພລາດຟອມ (Platform) ໃດໜຶ່ງ ໂດຍບໍ່ໄດ້ຮັບອະນຸຍາດ ແລະ ໃຫ້ບໍລິການຊັບສິນດີຈີຕອນບໍ່ຖືກຕ້ອງກັບການເປີດເຜີຍຂໍ້ມູນ ຫຼື ໂຄສະນາ;
5. ດຳເນີນການຂຸດຄົ້ນ ແລະ ໃຫ້ບໍລິການ ຊັບສິນດີຈີຕອນບໍ່ຖືກຕ້ອງກັບການເປີດເຜີຍຂໍ້ມູນ ຫຼື ໂຄສະນາ;
6. ເປີດເຜີຍຂໍ້ມູນທີ່ເປັນຂໍ້ມູນລັບຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ໂດຍບໍ່ໄດ້ຮັບອະນຸຍາດ;
7. ກົດໜ່ວງ, ຖ່ວງດຶງ, ດັດແປງ, ປອມແປງ, ປົກປິດ ຫຼື ເຊື່ອງອຳ ເອກະສານ ຫຼື ຂໍ້ມູນກ່ຽວກັບຊັບສິນດີຈີຕອນ;
8. ສະໜອງຂໍ້ມູນບໍ່ຄົບຖ້ວນ, ບໍ່ຖືກຕ້ອງຕາມຄວາມເປັນຈິງ, ລາຍງານຊັກຊ້າ ຫຼື ບໍ່ລາຍງານ, ປະຕິເສດການຮ່ວມມືໃນການກວດກາຂອງຂະແໜງການກ່ຽວຂ້ອງ ແລະ ເຈົ້າໜ້າທີ່ຂອງລັດ;
9. ໂຄສະນາເກີນຄວາມເປັນຈິງ ແລະ ເກີນຂອບເຂດຄວາມຮັບຜິດຊອບບໍລິການຂອງຕົນເອງທີ່ໄດ້ຮັບອະນຸຍາດຈາກລັດຖະບານ.

**ມາດຕາ 12 ອົງການຄຸ້ມຄອງ**

ລັດຖະບານ ຄຸ້ມຄອງທຸລະກຳຊັບສິນດີຈີຕອນຢ່າງລວມສູນ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດໂດຍມອບໃຫ້:

1. ກະຊວງເຕັກໂນໂລຊີ ແລະ ການສື່ສານ ເປັນຜູ້ຮັບຜິດຊອບໂດຍກົງ ໃນການຄຸ້ມຄອງ, ຕິດຕາມກວດກາ ແລະ ອະນຸມັດການນຳໃຊ້ເຕັກໂນໂລຊີເພື່ອດຳເນີນທຸລະກິດຂຸດຄົ້ນເງິນຄຣິບໂຕ ແລະ ລະບົບຖານການຊື້-ຂາຍເງິນຄຣິບໂຕ ບົນພື້ນຖານປະສານສົມທົບ ແລະ ແລກປ່ຽນຂໍ້ມູນຂ່າວສານກັບພາກສ່ວນກ່ຽວຂ້ອງ;
2. ທະນາຄານແຫ່ງ ສປປ ລາວ ເປັນຜູ້ຮັບຜິດຊອບໂດຍກົງ ໃນການຄຸ້ມຄອງ, ຕິດຕາມກວດກາທຸລະກິດການຊື້-ຂາຍເງິນຄຣິບໂຕ ບົນພື້ນຖານປະສານສົມທົບ ແລະ ແລກປ່ຽນຂໍ້ມູນຂ່າວສານກັບພາກສ່ວນກ່ຽວຂ້ອງ ແລະ ຄຸ້ມຄອງກະແສເງິນຕາຕ່າງປະເທດເຂົ້າ-ອອກ ສປປ ລາວ ຕິດພັນກັບການເຄື່ອນໄຫວຂຸດຄົ້ນ ແລະ ຊື້-ຂາຍເງິນຄຣິບໂຕ.

**ມາດຕາ 13 ສິດ ແລະ ໜ້າທີ່ຂອງອົງການຄຸ້ມຄອງ**

ອົງການຄຸ້ມຄອງທຸລະກຳຊັບສິນດິຈິຕອນ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ສ້າງ ແລະ ປັບປຸງລະບຽບການຕ່າງໆ ທີ່ຕິດພັນກັບການດຳເນີນທຸລະກຳຊັບສິນດິຈິຕອນໃຫ້ແທດເໝາະກັບສະພາບເສດຖະກິດ-ສັງຄົມໃນແຕ່ລະໄລຍະ ຕາມພາລະບົດບາດຂອງແຕ່ລະອົງການຄຸ້ມຄອງ;
2. ກະກຽມ ແລະ ດຳເນີນການເຈລະຈາກັບ ບັນດາບໍລິສັດ ຫຼື ຜູ້ປະກອບການທີ່ມີມາດຕະຖານ, ເງື່ອນໄຂເໝາະສົມ ທີ່ລະບຸໃນມາດຕາ 6 ແລະ ມາດຕາ 8 ຂອງຂໍ້ຕົກລົງສະບັບນີ້.
3. ພິຈາລະນາອອກ ໃບອະນຸຍາດດຳເນີນທຸລະກິດ ແລະ ໃບຢັ້ງຢືນມາດຕະຖານເຕັກນິກ, ສັ່ງໂຈະ ຫຼື ຢຸດເຊົາ ການດຳເນີນທຸລະກິດຊັບສິນດິຈິຕອນຕາມລະບຽບການ;
4. ຄຸ້ມຄອງ ແລະ ຕິດຕາມກວດກາ ຜູ້ດຳເນີນທຸລະກິດຊັບສິນດິຈິຕອນໃນການຈັດຕັ້ງປະຕິບັດໃຫ້ສອດຄ່ອງຕາມກົດໝາຍ ແລະ ລະບຽບການຂອງ ສປປ ລາວ;
5. ກຳນົດຫຼັກການ, ເງື່ອນໄຂເພີ່ມຕື່ມ ຫຼື ຮຽກຮ້ອງຂໍ້ມູນເພີ່ມເຕີມກ່ຽວກັບການຄຸ້ມຄອງທຸລະກິດຊັບສິນດິຈິຕອນ;
6. ນຳໃຊ້ສິດ ແລະ ໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 14 ສິດ ແລະ ໜ້າທີ່ຂອງຂະແໜງການອື່ນທີ່ກ່ຽວຂ້ອງ**

ສິດ ແລະ ໜ້າທີ່ຂອງຂະແໜງການອື່ນທີ່ກ່ຽວຂ້ອງ ເປັນຕົ້ນ ກະຊວງການເງິນ ມີໜ້າທີ່ຄຸ້ມຄອງດ້ານການເກັບລາຍຮັບພາສີ-ສ່ວຍສາອາກອນ ແລະ ນະໂຍບາຍດ້ານການເງິນ, ກະຊວງພະລັງງານ ແລະ ບໍ່ແຮ່ ແລະ ລັດວິສາຫະກິດໄຟຟ້າລາວ ມີໜ້າທີ່ກຳນົດຈຸດສະຖານທີ່ຕັ້ງໂຮງງານຂຸດຄົ້ນເງິນຄຣິບໂຕ, ເຈລະຈາສັນຍາຊື້-ຂາຍໄຟຟ້າ ແລະ ຮັບປະກັນການສະໜອງພະລັງງານໄຟຟ້າໃຫ້ພຽງພໍ. ສ່ວນຂະແໜງການອື່ນທີ່ກ່ຽວຂ້ອງ ມີໜ້າທີ່ໃຫ້ການຮ່ວມມືກັບອົງການຄຸ້ມຄອງໃນການຈັດຕັ້ງປະຕິບັດ ແລະ ຄຸ້ມຄອງທຸລະກິດຊັບສິນດິຈິຕອນຕາມພາລະບົດບາດຂອງຕົນ.

**ມາດຕາ 15 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດ ຂໍ້ຕົກລົງສະບັບນີ້ ແລະ ກົດໝາຍ, ລະບຽບການທີ່ກ່ຽວຂ້ອງຈະຖືກສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໄໝ, ໂຈະການເຄື່ອນໄຫວທຸລະກິດສ່ວນໃດສ່ວນໜຶ່ງ ຫຼື ທັງໝົດໄວ້ຊົ່ວຄາວ, ຖອນໃບອະນຸຍາດດຳເນີນທຸລະກຳຊັບສິນດິຈິຕອນ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ລົງໂທດທາງອາຍາຕາມກໍລະນີເບົາ ຫຼື ໜັກ.

ໃນກໍລະນີການມອບພັນທະຊັກຊ້າ ຫຼື ບໍ່ມອບພັນທະທາງດ້ານການເງິນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 10 ຂອງຂໍ້ຕົກລົງສະບັບນີ້ຈະຖືກປະຕິບັດມາດຕະການປັບໄໝຕາມແຕ່ລະກໍລະນີ ທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການກ່ຽວຂ້ອງ ຂອງ ສປປ ລາວ.

**ມາດຕາ 16 ການຈັດຕັ້ງປະຕິບັດ**

ທຸລະກຳຊັບສິນດິຈິຕອນຈະດຳເນີນທົດລອງໃນໄລຍະ 03 ປີ ແລ້ວຈຶ່ງປະເມີນຜົນໄດ້ ຜົນເສຍ ສະຫຼຸບ ລາຍງານລັດຖະບານ ເພື່ອພິຈາລະນາຕາມຄວາມເໝາະສົມ.

ກະຊວງເຕັກໂນໂລຊີ ແລະ ສື່ສານ ເປັນໃຈກາງປະສານງານກັບບັນດາກະຊວງ, ຂະແໜງການທີ່ກ່ຽວຂ້ອງຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ໃຫ້ໄດ້ຮັບຜົນດີ.

ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນຈົ່ງຮັບຮູ້ ແລະ ໃຫ້ການຮ່ວມມືໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຕາມພາລະບົດບາດຂອງຕົນເອງຢ່າງເຂັ້ມງວດ.

**ມາດຕາ 17 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ລັດຖະມົນຕີ**
**ກະຊວງເຕັກໂນໂລຊີ ແລະ ການສື່ສານ**

ບໍ່ວຽງຄຳ ວົງດາລາ